| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoJ-DJSP-3 | 28.12.2017 | ກົມສົ່ງເສີມລະບົບຍຸຕິທໍາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | M - ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ວິສາຫະກິດກົດໝາຍ ແມ່ນຜູ້ໃຫ້ການບໍລິການທາງດ້ານກົດໝາຍ ໃຫ້ແກ່ປະຊາຊົນ ແລະ ອາດຈະສົ່ງຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດທາງດ້ານກົດໝາຍຂອງຜູ້ທີ່ມາໃຊ້ບໍລິການໄດ້, ດັ່ງນັ້ນ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ກວດສອບ ແລະ ຮັບປະກັນຄຸນສົມບັດຂອງຜູ້ໃຫ້ການບໍລິການ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຢາກດໍາເນີນທຸລະກິດໃຫ້ຄໍາປຶກສາທາງດ້ານກົດໝາຍ ຊຶ່ງລວມມີ: 1. ໃຫ້ຄໍາປຶກສາ, ແນະນໍາ ແລະ ຄໍາເຫັນທາງດ້ານກົດໝາຍໂດຍທາງລາຍລັກອັກສອນ ແລະ ທາງປາກເປົ່າແກ່ຜູ້ມາໃຊ້ບໍລິການຕາມແຕ່ລະກໍລະນີ; 2. ສ້າງຮ່າງສັນຍາ, ຮ່າງເອກະສານ ແລະ ປະກອບເອກະສານຕ່າງໆ ທີ່ມີຄວາມໝາຍທາງດ້ານກົດໝາຍ ຕາມການສະເໜີຂອງຜູ້ມາໃຊ້ບໍລິການ ໂດຍອີງຕາມກົດໝາຍ ແລະ ລະບຽບການຂອງພາກສ່ວນທີ່ກ່ຽວຂ້ອງ; 3. ຂຽນຄໍາຮ້ອງ, ຄໍາສະເໜີ, ຄໍາຮ້ອງຟ້ອງ, ຄໍາແກ້ຟ້ອງ, ຄໍາຮ້ອງຂໍອຸທອນ, ຄໍາຮ້ອງຂໍລົບລ້າງ ຕາມການສະເໜີຂອງຜູ້ມາໃຊ້ບໍລິການ ແລະ ຕາມແບບຟອມທີ່ພາກສ່ວນກ່ຽວຂ້ອງກໍານົດອອກ; 4. ແປຂໍ້ກໍານົດຂອງກົດໝາຍ ຫຼື ລະບຽບການຕ່າງໆ ທີ່ເປັນພາສາຕ່າງປະເທດມາເປັນພາສາລາວຢ່າງເປັນທາງການ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ວິສາຫະກິດກົດໝາຍຕ່າງປະເທດ ທີ່ຂຶ້ນທະບຽນຢູ່ ສປປ ລາວ ມີສິດໃຫ້ຄໍາປຶກສາກ່ຽວກັບກົດໝາຍຕ່າງປະເທດ ແລະ ກົດໝາຍສາກົນ ແຕ່ຫາກວິສາຫະກິດດັ່ງກ່າວ ມີທະນາຄວາມລາວ |

| ຂໍ້ມູນພື້ນຖານ | |
|---|---|
| | ຮ່ວມລົງທຶນ ຫລື ສັງກັດ ມີສິດໃຫ້ຄໍາປຶກສາກ່ຽວກັບ ກົດໝາຍລາວ ແລະ ວ່າຄວາມ ຢູ່ ສານປະຊາຊົນ ຂອງ ສປປ ລາວ ໂດຍທະນາຄວາມລາວຜູ້ນັ້ນ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ | 30 | ກົດໝາຍກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໄລຍະເວລາໃນການພິຈາລະນາແມ່ນ 15 ຫາ 30 ວັນລັດຖະການ |
| ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ | 1. ແມ່ນຜູ້ຮັບໃຊ້ປະຊາຊົນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດດ້ວຍຄວາມບໍລິສຸດໃຈ, ບໍ່ສວຍໃຊ້ ການໃຫ້ບໍລິການທາງດ້ານກົດໝາຍເພື່ອຫາຜົນປະໂຫຍດສ່ວນຕົວທີ່ຜິດກົດໝາຍ; 2. ຜູ້ຂໍອະນຸຍາດ ຕ້ອງແມ່ນນັກວິຊາການກົດໝາຍຊັ້ນສູງຂຶ້ນໄປ ແລະ ໄດ້ຜ່ານວຽກງານຕົວຈິງຕາມວິຊາການດັ່ງກ່າວ ມາແລ້ວຢ່າງໜ້ອຍ 03 ປີ ຂຶ້ນໄປ. ຖ້າຜູ້ໄດ້ຮັບອະນຸຍາດບໍ່ແມ່ນນັກກົດໝາຍ ກໍ່ຕ້ອງມີ ຜູ້ຖືຮຸ້ນໃນວິສາຫະກິດນັ້ນທີ່ເປັນທະນາຍຄວາມ; 3. ບໍ່ເຄີຍຖືກປະຕິບັດວິໄນຈາກລັດ ຫຼື ບໍ່ເຄີຍຖືກ ສານຕັດສິນລົງໂທດຕັດອິດສະຫຼະພາບມາກ່ອນ, ຍົກເວັ້ນການກະທໍາຜິດດ້ວຍຄວາມລະມັດລະວັງ; 4. ບໍ່ເປັນພະນັກງານສັງກັດລັດ; 5. ມີທຶນຈົດທະບຽນຢ່າງໜ້ອຍ 10,000,000 ກີບ ຂຶ້ນໄປ. 6. ມີ ສະຖານທີ່ເປີດໃຫ້ບໍລິການທີ່ແນ່ນອນ ໂດຍມີປ້າຍ ແລະ ຂຶ້ນທະບຽນຕາມລະບຽບກົດໝາຍ. | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍ ໃບອະນຸຍາດ? | ປະຕິເສດກໍລະນີທີ່ຜູ້ຮ້ອງຂໍບໍ່ສາມາດປະຕິບັດໄດ້ຕາມ ເງື່ອນໄຂ ຫລື ຄຸນະສົມບັດທີ່ລະບຸໄວ້ໃນ ກົດໝາຍ ແລະ ລະບຽບການ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 24 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ ອະນຸຍາດ | ຕ້ອງໄດ້ຂໍອະນຸຍາດສືບຕໍ່ຄືນໃໝ່ 01 ເດືອນກ່ອນໝົດອາຍຸການ. ຖ້າຫາກກາຍກໍານົດຂໍອະນຸຍາດສືບ ຕໍ່ຄືນໃໝ່ນີ້ແລ້ວ ຈະຖືວ່າໝົດສິດໃນການເປີດໃຫ້ບໍລິການໂດຍທັນທີ. |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື | ຄ່າບໍລິການວິຊາ ການ | ຄ່າທໍານຽມ | ຄ່າ ແບບຟອມ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທຳນຽມ | | | | |
|---|---|---|---|---|
| ບໍ່? | | | ຄຳຮ້ອງ | |
| ແມ່ນແລ້ວ | 200000.00 | 400000.00 | 0.00 | 600000.00 |
| ຄຳເຫັນ | ອີງຕາມ ລັດຖະບັນຍັດຂອງປະທານປະເທດ ເລກທີ 003/ປປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 200000.00 | 400000.00 | 0.00 | 600000.00 |
| ຄຳເຫັນ | ອີງຕາມ ລັດຖະບັນຍັດຂອງປະທານປະເທດ ເລກທີ 003/ປປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄຳເຫັນ |
| ກົດໝາຍວ່າດ້ວຍ ທະນາຍຄວາມ | 010/ສພຊ | 21.12.2011 | ພາກທີ V ວິສາຫະກິດກົດໝາຍ ໝວດທີ 1 ການສ້າງຕັ້ງວິສາຫະກິດກົດໝາຍ (ມາດຕາ 44, 45 ແລະ 47) |
| ຂໍ້ຕົກລົງ ວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການທີ່ປຶກສາກົດໝາຍ | 178/ກຍ | 18.09.2007 | ມາດຕາ 4 ຫາ ມາດຕາ 7 |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ສັນຍາຮ່ວມທຶນ, ສັນຍາສ້າງຕັ້ງ |
| ບັດທະນາຍຄວາມ |
| ສັນຍາເຊົ່າທີ່ຕັ້ງສຳນັກງານ |
| ໃບສັນຍາຈ້າງພະນັກງານ |
| ຮູບ |

| ເອກະສານປະກອບ |
|---|
| ບັນຊີຜູ້ຖືຮຸ້ນ |
| ບົດວິພາກເສດຖະກິດເຕັກນິກ |
| ກົດລະບຽບວິສາຫະກິດ |
| ໃບຢັ້ງຢືນສຸຂະພາບ |
| ໃບຢັ້ງຢືນທີ່ຢູ່ |
| ໃບແຈ້ງໂທດ |
| ຊີວະປະຫວັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 5 | 0 |